## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 29 ເມສາ 2018 (4-29-2018)

## ຢືນກັບຄວາມສຳນຶກຜິດແລະຊອບ

*ແມ່ນໃຜທີ່ແວັບເຂົ້າໃນສມອງໃນຖານະເປັນຜູ້ຢືນຢັດຢ່າງໝັ້ນຄົງໃນຄວາມສຳນຶກຜິດແລະຊອບ?*

**ຈຸດສຳຄັນໃນບົດຮຽນ**: ມັນຖືກຕ້ອງຢູ່ສເມີໃນການເຮັດໃນສິ່ງທີ່ຖືກຕ້ອງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ບາງຄັ້ງມັນເປັນການຍາກໃນການເລືອກທີ່ຈະເວົ້າອອກມາ, ເຖິງແມ່ນວ່າເມື່ອພວກເຮົາຮູ້ວ່າບາງສິ່ງບາງຢ່າງມັນຜິດ. ຊໍ້າບໍ່ໜຳພວກເຮົາອາດຈະຫາທາງໃຫ້ມັນມິດງຽບໄວ້ຕໍ່ໄປ. ສິ່ງສຸດທ້າຍ, ເປັນຫຍັງຈຶ່ງຈະຕ້ອງສ່ຽງໃນການຈ່ອງກັມຈ່ອງເວນກັນ ຫຼືການສູນເສັຽຕຳແໜ່ງ ຫຼືການຢືນຈັ້ງຢູ່ໃນໂບດ ຫຼືຄຸ້ມເຂດຂອງພວກເຮົາ?

ໃນວັນທີ 1, ເດືອນທັນວາ, 1955, ໂຣຊາ ພາກ, ຜູ້ຍິງຄົນຜິວດຳ, ໄດ້ປະຕິເສດຕໍ່ຄຳສັ່ງຂອງຄົນຂັບຣົດເມທີ່ໃຫ້ລາວຍອມຈຳນົນປະບ່ອນນັ່ງໃຫ້ຜູ້ເດີນທາງຄົນຜິວຂາວທີ່ ມັນກັມເມີຣີ, ລັດອາລາບາມາ. ໃນຄວາມເປັນຈິງແລ້ວມັນເປັນການວາງທ່າທີອັນງ່າຍດາຍ, ແຕ່ວ່າມັນກໍດັງກ້ອງທົ່ວໂລກແລະມັນກໍກາຍເປັນຈຸດເລີ້ມຕົ້ນຂອງຂະບວນການສິດທິປະຊາຊົນໃນອະເມຣິກາ. ນາງພາກໄດ້ເປັນຜູ້ຕິດຕາມພຣະຄຣິດຢ່າງເຄັ່ງຄັດ, ບໍ່ໄດ້ມີອຳນາດທີ່ຈະປ່ຽນແປງກົດໝາຍຂອງ ຈິມ ຄໂຣ ຫຼືປ່ຽນຈິດໃຈຂອງພວກທີ່ເຊື່ອໃນອຳນາດພິເສດສູງສຸດຂອງຄົນຜິວຂາວ ແຕ່ວ່ານາງສາມາດເຮັດສິ່ງນີ້ທີ່ໄດ້ຢູ່ຕໍ່ໜ້ານາງ.

ພວກເຮົາສາມາດເກີດຄວາມໜັກໃຈໂດຍຄວາມບໍ່ທ່ຽງທັມອັນຮ້າຍກາດທີ່ອ້ອມຮອບພວກເຮົາ. ຄວາມຢ້ານກົວຫຼືຄວາມຮູ້ສຶກບໍ່ມີອຳນາດພຽງພໍກໍອາດຈະເຮັດໃຫ້ພວກເຮົາລ່ອຍເພັ່ງໄດ້, ແຕ່ວ່າຕົວຢ່າງຂອງທ່ານໂມດີຄາຍໄດ້ສະແດງໃຫ້ພວກເຮົາເຫັນວ່າອຳນາດຂອງການເຮັດໃນສິ່ງທີ່ນ້ອຍໆ ອັນຖືກຕ້ອງນັ້ນ ທີ່ມັນຢູ່ຕໍ່ໜ້າພວກເຮົາ.

**ພຣະຄັມພີກ່າວວ່າຢ່າງໃດ? (ຈົ່ງເບິ່ງຕາມຂໍ້ 1, 2, )**

### ການສຶກສາພຣະຄັມພີ

**1. <u>ເອັສເທີ 2:21-23</u>**

*21. ໃນຄັ້ງນັ້ນເມື່ອໂມດີຄາຍນັ່ງຢູ່ທີ່ປະຕູພຣະຣາຊວັງ ບິກທານແລະເຕເຣສ ຂັນທີສອງຄົນຂອງພຣະຣາຊາ ຜູ້ເຝົ້າປະຕູຫ້ອງນອນ ມີຄວາມໂກດແລະຊອກຫາທາງທີ່ຈະທຳຮ້າຍກະສັດອາຮາຊູເອຣູສ. 22. ເຣື່ອງນີ້ຮູ້ເຖິງໂມດີຄາຍແລະທ່ານກໍທູນພຣະຣາຊີນີເອສເທີ ພຣະນາງເອສເທີຂາບທູນພຣະຣາຊາໃນນາມຂອງໂມດີຄາຍ. 23. ເມື່ອມີການສອບສວນເຣື່ອງນີ້ວ່າເປັນຄວາມຈິງແລ້ວ ພຣະຣາຊາກໍຊົງໃຫ້ແຂວນຄໍສອງຄົນນັ້ນເສັຽທີ່ຫຼັກ ແລະບັນທຶກເຣື່ອງໄວ້ໃນໜັງສືພົງສາວະດານຕໍ່ພຣະພັກພຣະຣາຊາ.*

**ໂມດີຄາຍໄດ້ຢູ່ຖືກບ່ອນແລະຖືກເວລາ** "ໂມດີຄາຍໄດ້ນັ່ງຢູ່ທີ່ປະຕູພຣະຣາຊວັງ," ບ່ອນທີ່ເຈົ້າໜ້າທີ່ທັງຫຼາຍທຳທຸຣະກິດຢູ່ນັ້ນ. ມັນເປັນບ່ອນສັບສົນວຸ້ນວາຍຫຼາຍ ເພາະທຸກໆ ລະດັບຂອງພວກຜູ້ປົກຄອງໄດ້ເຄື່ອນທີ່ເຂົ້າອອກຢູ່ຕລອດ, ການເຮັດວຽກງານຂອງເຈົ້າໜ້າທີ່ທຸຣະກິດຂອງປະເທດ. ບ່ອນນີ້ແມ່ນສູນກາງຂອງກິຈການຕ່າງໆ ຂອງອານາຈັກ,

ບ່ອນທີ່ພໍ່ຄ້າຊາວຂາຍກະທໍາທຸຣະກິດ, ຄົນຫຼວງຫຼາຍທີ່ຫຍຸ້ງກັບວຽກງານກໍເຜີຍແຜ່ການເວົ້າຂວັນຂອງພວກເຂົາ ແລະກໍເປັນການເຕົ້າໂຮມທີ່ມີພລັງ.

ທ່ານໂມດີຄາຍປາກົດວ່າໄດ້ຮັບໃຊ້ໃນບ່ອນທີ່ສໍາຄັນຄືປະຕູພຣະຣາຊວັງ, ພວກເຮົາກໍບໍ່ແນ່ວ່າທ່ານເຮັດຫຍັງຢູ່ທີ່ນັ້ນ. ທ່ານອາດຖືກແຕ່ງຕັ້ງຫຼືຖືກເລື່ອນຕໍາແໜ່ງສູງຂຶ້ນຫຼັງຈາກທີ່ນາງເອັສເທີໄດ້ເປັນຣາຊີນີ. ອັນນີ້ອາດຈະເປັນການໃຫ້ລາງວັນແກ່ທ່ານໂມດີຄາຍ, ຖານະເປັນພໍ່ທີ່ໄດ້ຮັບເອົານາງເອັສເທີໃຫ້ເປັນລູກບຸນທັມ ແລະໄດ້ບົວລະບັດຊຸບລ້ຽງນາງຫຼັງຈາກທີ່ພໍ່ແມ່ຂອງນາງໄດ້ເສັຽຊີວິດໄປແລ້ວ.

ປະຕູຣາຊວັງກໍຍັງໄດ້ເປັນສູນກາງທີ່ກໍ່ໃຫ້ເກີດການຢາກຮູ້ຢາກເຫັນຫຼາຍຢ່າງອີກດ້ວຍ, ແລະທ່ານໂມດີຄາຍກໍໄດ້ຢູ່ສູນກາງຂອງນັ້ນດ້ວຍ. ທ່ານໂມດີຄາຍໄດ້ຮຽນຮູ້ວ່າມີການວາງແຜນລອບສັງຫານກະສັດ. ນີ້ເປັນເຣື່ອງລາວທີ່ບໍ່ຄາດຝັນ, ກັບລາຍລະອຽດຕ່າງໆຂອງຄວາມຕື່ນເຕັ້ນຂອງນັກສືບ. ຣາຊີນີຜູ້ນຶ່ງຖືກປົດຈາກຕໍາແໜ່ງ ແລະຣາຊີນີຄົນໃໝ່ໄດ້ຖືກຄັດເລືອກແລະໄດ້ສວມມຸງກຸດ. ບາງຄົນໃນຣາຊວັງເບິ່ງເໝືອນວ່າບໍ່ພໍໃຈແລະວາງແຜນຍຶດອໍານາດ.

ທ່ານໂມດີຄາຍມີທາງເລືອກ. ທ່ານສາມາດເກັບເຊື່ອງລາຍລະອຽດທັງໝົດນີ້ໄວ້ໂດຍການໃຫ້ເຫດການເຫຼົ່ານີ້ປາກົດອອກມາເອງ. ບາງທີຖ້າວ່າກະສັດຖືກປະຫານຊີວິດ , ນາງເອັສເທີກໍຈະຂຶ້ນຄອງແລະນໍາພາ, ໃຫ້ທ່ານໂມດີຄາຍມີອິດທິພົນແລະອໍານາດຫຼາຍຂຶ້ນກວ່າເກົ່າ.

| ການສ່ຽງພັຍອັນໃດທີ່ທ່ານໂມດີຄາຍແລະນາງເອັສເທີໄດ້ຮັບເອົາໃນຂໍ້ພຣະຄໍາເຫຼົ່ານີ້? |
|---|

ແຕ່ວ່າພວກເຮົາບໍ່ສາມາດສົມມຸດເອົາວ່າທ່ານໂມດີຄາຍໄດ້ຄິດຫາທາງເລືອກແນວອື່ນນອກຈາກການເຮັດໃນສິ່ງທີ່ຖືກຕ້ອງແລະປ້ອງກັນການຕາຍຂອງກະສັດ. ທ່ານໂມດີຄາຍອາດຈະບໍ່ມັກຜູ້ປົກຄອງທີ່ບໍ່ເຊື່ອພຣະເຈົ້າ, ແຕ່ທ່ານກໍຍັງຍິນມີເຂົ້າໄປມີສ່ວນ.

ເຫດການຂອງທ່ານໂມດີຄາຍໄດ້ສະແດງອອກເຖິງຄວາມສໍາຄັນໃນການເຮັດສິ່ງທີ່ຖືກຕ້ອງໃນຂະນະນັ້ນ, ເຖິງແມ່ນວ່າມັນບໍ່ຕົງກັບຄວາມຮູ້ສຶກຂອງທ່ານຫຼືຜົນຕ່າງໆທີ່ຕາມມາ. ໃນແງ່ນຶ່ງ, ນີ້ເປັນທ່າທີນ້ອຍອັນນຶ່ງ ທ່ານພຽງແຕ່ສົ່ງລາຍລະອຽດຊື່ໆ. ຂະນະທີ່ພວກເຮົາຈະເຫັນໃນພາກຕໍ່ໄປ, ທີ່ທ່າທີອັນນ້ອຍໆແຕ່ມີຜົນກະທົບອັນຍິ່ງໃຫຍ່, ແຕ່ວ່າທ່ານໂມດີຄາຍບໍ່ໄດ້ຮູ້ສິ່ງນັ້ນເລີຍ; ທ່ານບໍ່ສາມາດເຫັນຈິນຕະນາການການກະທໍາອັນນີ້ຈະເປັນທີ່ຕັ້ງສໍາລັບບາງຢ່າງທີ່ຍິ່ງໃຫຍ່ກວ່າຫຼາຍຕໍ່. ທ່ານຮູ້ພຽງວ່າມັນເປັນການເຮັດທີ່ຖືກຕ້ອງ.

| ພັຍອັນຕລາຍອັນໃດທີ່ພວກເຮົາຈະໄດ້ຮັບເມື່ອພວກເຮົາເວົ້າອອກມາຕໍ່ສູ້ກັບພວກທີ່ເຮັດຜິດ? |
|---|

ການກະທໍາຂອງທ່ານໂມດີຄາຍບໍ່ໄດ້ເຫັນຜົນຕອບແທນອັນມີກຽດຢ່າງກະທັນຫັນ, ແຕ່ວ່າໄດ້ຖືກບັນທຶກໄວ້ໃນປະຫວັດຂອງກະສັດ. ສ່ວນຫຼາຍ, ເມື່ອພວກເຮົາເຊື່ອຟັງຄວາມພຣະຜູ້ເປັນເຈົ້າ, ຄວາມເຊື່ອຟັງຄວາມຂອງພວກເຮົາບໍ່ມີໃຜເຫັນແລະບໍ່ໄດ້ຖືກໃຫ້ຄວາມສົນໃຈສົມດັ່ງທີ່ພວກເຮົາຄິດໝາຍໄວ້. ພວກເຮົາສາມາດເອົາການເລົ້າໂລມໃນການຮູ້ຈັກວ່າທຸກສິ່ງທີ່ພວກເຮົາໄດ້ເຮັດແມ່ນພຣະເຈົ້າຊົງຮູ້ເຫັນ ແລະຖືກບັນທຶກໄວ້ໂດຍກະສັດຂອງພວກເຮົາ-ກະສັດເຢຊູ. ທຸກໆສິ່ງທີ່ເຊື່ອງຊ້ອນໄວ້ມື້ນຶ່ງກໍຈະຖືກເປີດເຜີຍ. (ເບິ່ງ ລູກາ 8:17.)

ຂ້າພະເຈົ້າເດົາເອົາວ່າທ່ານໂມດີຄາຍຄົງຫວັງຈະໄດ້ກຽດເມື່ອລາວເວົ້າເຣື່ອງນີ້ຂຶ້ນມາ. ເຖິງວ່າກຽດຈະມາຕາມຫຼັງກໍຕາມ, ລາວໄດ້ກະທໍາເພາະມັນເປັນການເຮັດໃນສິ່ງທີ່ຖືກຕ້ອງ. ໃນຖານະເປັນຄຣິສຕຽນ, ພວກເຮົາຕຽມພ້ອມຢູ່ສເມີທີ່ຈະເຮັດໃນສິ່ງທີ່ຖືກຕ້ອງ ບໍ່ວ່າຜົນສ່ວນຕົວຈະອອກມາແບບໃດກໍຕາມ. ຄວາມຈິງແລ້ວ, ພວກເຮົາອາດຈະຖືກຄວາມຍາກລໍາບາກຈາກຜົນຕ່າງໆທີ່ຕາມມາສໍາລັບການເຮັດໃນສິ່ງທີ່ຖືກຕ້ອງ.

ຄວາມຈິງແລ້ວທ່ານໂມດີຄາຍໄດ້ຮັບກຽດສໍາລັບການກະທໍາຂອງລາວ (ເບິ່ງ ເອັສເທີ 5), ແຕ່ວ່າພຽງຊົ່ວຂະນະດຽວກໍໄດ້ຖືກເບິ່ງຂ້າມລາວໄປແລ້ວ. ບໍ່ຄືກັນກັບກະສັດອາຮາຊູເອຣຸສ, ແຕ່ວ່າ ກະສັດເຢຊູເຈົ້າບໍ່ໄດ້ລືມການເຊື່ອຟັງຄວາມຂອງພວກເຮົາ. ແຕ່ວ່າສ່ວນຫຼາຍ, ລາງວັນຂອງພວກເຮົາກໍຄືກັບຂອງທ່ານໂມດີຄາຍ, ຈະມາທີຫຼັງ. ພວກເຮົາຍັງຈໍາຄໍາຂອງທ່ານເປໂຕ: *"ແຕ່ເຖິງແມ່ນວ່າພວກທ່ານຄວນຈະທົນທຸກເພາະໄດ້ເຮັດການຊອບທັມ, ພວກທ່ານກໍເປັນສຸກ"* (1 ເປໂຕ 3:14).

ພວກເຮົາບໍ່ໄດ້ເຊື່ອຟັງພຣະເຢຊູເພື່ອເຫັນແກ່ລາງວັນຕ່າງໆຫຼືສະງ່າຣາສີ; ພວກເຮົາເຊື່ອຟັງຄວາມກໍເພາະວ່າມັນແມ່ນສິ່ງທີ່ພຣະອົງຮຽກເອີ້ນໃຫ້ພວກເຮົາເຮັດ. ພວກເຮົາສະແດງອອກການກະທຳຕ່າງໆຂອງຄວາມຍຸດຕິທັມເພື່ອຕາງໜ້າຄົນອື່ນໆເພາະວ່າພວກເຮົາຮັກພວກເຂົາເຈົ້າແລະພວກເຮົາຮັກພຣະເຢຊູ.

## 2. <u>ເອັສເທີ 3:1-6</u>

*1. ພາຍຫຼັງເຫດການເຫຼົ່ານີ້ ກະສັດອາຮາຊູເອຣູສຊົງເລື່ອນຍົດຮາມານບຸດຮັມເມດາທາ ຄົນອາກັກ ພຣະຣາຊາຊົງເລື່ອນທ່ານແລະຊົງຕັ້ງເກົ້າອີ້ຂອງທ່ານໄວ້ເໜືອກວ່າຂອງເຈົ້ານາຍທັງປວງທີ່ຢູ່ກັບພຣະອົງ. 2. ຂ້າຣາຊການຊຶ່ງຢູ່ທີ່ປະຕູພຣະຣາຊວັງກໍຂາບລົງສະແດງຄວາມໂຄຣົບຕໍ່ຮາມານ ເພາະພຣະຣາຊາຊົງບັນຊາໃຫ້ສະແດງຄວາມໂຄຣົບຕໍ່ທ່ານເຊັ່ນນັ້ນ ແຕ່ໂມດີຄາຍບໍ່ໄດ້ຂາບຫຼືສະແດງຄວາມໂຄຣົບ. 3 ຂ້າຣາຊການຊຶ່ງຢູ່ທີ່ປະຕູພຣະຣາຊວັງຈຶ່ງເວົ້າກັບໂມດີຄາຍວ່າ, "ເປັນຫຍັງທ່ານລະເມີດຄຳສັ່ງຂອງພຣະຣາຊາ". 4. ຢູ່ມາເມື່ອເຂົາທັງຫຼາຍເວົ້າກັບທ່ານມື້ແລ້ວມື້ເລົ່າ ແລະທ່ານບໍ່ຟັງເຂົາ ເຂົາກໍໄປບອກຮາມານເພື່ອຈະເບິ່ງວ່າຖ້ອຍຄຳຂອງໂມດີຄາຍຈະຊະນະຫຼືບໍ່ ເພາະທ່ານບອກເຂົາວ່າທ່ານເປັນຄົນຢິວ. 5. ເມື່ອຮາມານເຫັນວ່າໂມດີຄາຍບໍ່ຂາບລົງຫຼືສະແດງຄວາມໂຄຣົບຕໍ່ທ່ານ ກໍເດືອດດານ. 6. ແຕ່ທ່ານເຫັນວ່າເປັນການເສັຽກຽດທີ່ຈະຈັບກຸມໂມດີຄາຍຄົນດຽວ ຮາມານຈຶ່ງຫາຊ່ອງທາງທີ່ຈະທຳລາຍຢິວທັງໝົດ ຄືຊົນຊາດຂອງໂມດີຄາຍທົ່ວຣາຊອານາຈັກຂອງອາຮາຊູເອຣູສ.*

ທ່ານຈະຄິດວ່າຫຼັງຈາກທີ່ທ່ານໂມດີຄາຍໄດ້ຊ່ວຍຊີວິດກະສັດໄວ້ໂດຍການຂັດຂວາງການປອງຮ້າຍເພິ່ນ, ກະສັດກໍຈະໃຫ້ກຽດພິເສດແກ່ທ່ານໂມດີຄາຍບາງຢ່າງເປັນຜົນຕອບແທນ. ແຕ່ແທນທີ່ຈະເປັນຢ່າງນັ້ນ, ກະສັດອາຮາຊູເອຣຸສໄດ້ເລື່ອນຂັ້ນໃຫ້ທ່ານຮາມານ. ຈົນມາເຖິງຕອນນີ້, ເຮົາບໍ່ໄດ້ຍິນເຖິງເຣື່ອງອັນໃດກ່ຽວກັບທ່ານຮາມານ. ແທ້ຈິງແລ້ວທ່ານໄດ້ເປັນຄົນທີ່ນັບໜ້າຖືຕາຂອງພວກນັກປົກຄອງໃນປະເທດເປີເຊັຽ, ແຕ່ວ່າດຽວນີ້ທ່ານເປັນຜູ້ທີສອງເທົ່ານັ້ນທີ່ຕໍ່ຈາກກະສັດ. ເຫດຜົນຂອງການໃຫ້ກຽດຄັ້ງນີ້ແລະການເລື່ອນຂັ້ນແມ່ນບໍ່ຮູ້ຈັກເລີຍ.

ດ້ວຍການໃຫ້ກຽດກະສັດກໍໄດ້ອອກຄຳສັ່ງໃຫ້ພວກຂ້າຣາຊການທີ່ສັດທາທຸກໆຄົນຮັບຮູ້ຕຳແໜ່ງຂອງທ່ານຮາມານໂດຍການຂາບລົງຄຳນັບຕໍ່ທ່ານ. ແລະການກະທຳອັນດຽວນັ້ນໄດ້ນຳພວກເຮົາກັບມາຫາທ່ານໂມດີຄາຍ ຜູ້ທີ່ປະຕິເສດບໍ່ຍອມຂາບລົງ.

| ແມ່ນຫຍັງທີ່ອາດເປັນແຮງດົນໃຈໃຫ້ທ່ານໂມດີຄາຍປະຕິເສດໃນການຂາບຄຳນັບ? |
|---|

ບາງທີທ່ານໂມດີຄາຍໄດ້ປະຕິເສດທີ່ບໍ່ຍອມຂາບລົງຄຳນັບກໍເພາະວ່າລາວຮູ້ສຶກວ່າລາວໄດ້ກ້າວກ່າຍການນະມັສການຂອງລາວຕໍ່ພຣະເຈົ້າຢາໂຮວາ. ລາວຈະບໍ່ຂາບລົງຕໍ່ຜູ້ໃດນອກຈາກພຣະເຈົ້າເທົ່ານັ້ນ. ແຕ່ວ່າ, ມັນບໍ່ໄດ້ລ່ວງລະເມີດກົດບັນຍັດຂອງພຣະເຈົ້າທີ່ຈະຂາບລົງຄຳນັບກະສັດຫຼືຜູ້ປົກຄອງ. ແຕ່ວ່າ; ທ່ານໂມດີຄາຍບໍ່ໄດ້ຢູ່ເອທີ, ມັນຈຶ່ງບໍ່ເປັນການທີ່ຄົນຕ້ອງແຕກຕື່ນ. ການປະຕິເສດຂອງທ່ານໂມດີຄາຍໃນການຂາບລົງຕໍ່ໜ້າທ່ານຮາມານແມ່ນການປະພຶດຂອງການສຳນຶກຜິດແລະຊອບ. ທ່ານໄດ້ປະຕິເສດທີ່ຈະປະນີປະນອມໃນສິ່ງທີ່ທ່ານໄດ້ເຊື່ອ.

ການຢືນຕໍ່ສູ້ແນວນັ້ນບໍ່ແມ່ນຈະປາສຈາກການສ່ຽງພັຍ. ທ່ານໂມດີຄາຍໄດ້ເຮັດແນວນັ້ນໂດຍຮູ້ດີວ່າທ່ານອາດຈະຕ້ອງໄດ້ເສັຽຊີວິດຂອງທ່ານເອງ. ທ່ານໂມດີຄາຍໄດ້ປະເຊີນໜ້າກັບຄວາມກົດດັນເພີ້ມອີກຈາກສະມາຊິກຂ້າຣາຊການທີ່ປະຕູຣາຊວັງ. ມື້ແລ້ວມື້ເລົ່າ, ພວກສະມາຊິກຂ້າຣາຊການທີ່ສັດທາຂອງກະສັດທີ່ປະຕູຣາຊວັງກໍໄດ້ເວົ້າແລະໄດ້ເຕືອນໂມດີຄາຍໃຫ້ຂາບຄຳນັບທ່ານຮາມານ.

ຄົນຄືຮາມານບໍ່ໄດ້ຖືເຣື່ອງນີ້ແບບເບົາບາງ. ຮາມານ "ກໍເດືອດດານ." ໃນຄວາມໂມໂຫຂອງລາວ, ທ່ານຮາມານໄດ້ຊອກຫາທາງກຳຈັດທ່ານໂມດີຄາຍ ແຕ່ວ່າໃນຂະນະທີ່ລາວກຳລັງຢູ່ໃນເຫດການນັ້ນ, ລາວຍັງຈະທຳລາຍຊາວຢິວທັງໝົດໃນອານາຈັກ; ອັນນີ້ແມ່ນການທຳລາຍລ້າງເຊື້ອຊາດທັງໝົດເລີຍ.

ການປະນີປະນອມບໍ່ແມ່ນສິ່ງບໍ່ດີສເມີໄປ. ທຸກໆຄອບຄົວຮູ້ຈັກຄຸນຄ່າຂອງການປະນີປະນອມດີເມື່ອມີການວາງແຜນໄປທ່ຽວພັກຜ່ອນ, ການເລືອກຮ້ານອາຫານ, ຫຼືແມ້ແຕ່ການຕັດສິນໃຈວ່າຈະເບິ່ງລາຍການຫຍັງໃນໂທຣະທັດ ແຕ່ວ່າເມື່ອເວົ້າເຖິງການເຮັດໃນສິ່ງທີ່ຖືກຕ້ອງແລະຢືນຕໍ່ສູ້ກັບສິ່ງບໍ່ຍຸດຕິທັມ, ພວກເຮົາຈະບໍ່ປະນີປະນອມເດັດຂາດ.

ຕົວຢ່າງຂອງໂມດີຄາຍໄດ້ເຕືອນພວກເຮົາວ່າການເຮັດໃນສິ່ງຖືກຕ້ອງບາງຄັ້ງກໍອັນຕະລາຍແລະຢ່າງສ່ຽງພັຍ. ການຢືນຕໍ່ສູ້ເພື່ອບາງຄົນໃນການປະເຊີນກັບການຮັກບັງຊັງບ່ຽງກໍເຮັດໃຫ້ພວກເຮົາເສັຽເພື່ອນໃນຄວາມສັມພັນ. ການປະຕິເສດທີ່ຈະສໍ້ໂກງລູກຄ້າຫຼືຂາປະຈຳພວກເຮົາກໍຈະເສັຽວຽກການຂອງພວກເຮົາ ການປ່ອຍໃຫ້ເດັກນ້ອຍທຸກໆຄົນທີ່ເຊັນຊື່ເຂົ້າໃນທີມແລະເຂົ້າຫຼິ້ນໃນເກມກໍຈະບໍ່ມີການຊະນະ.

ພວກເຮົາຈະບໍ່ຖອຍຫຼັງ ພວກເຮົາປະຕິເສດການປະນີປະນອມ ເມື່ອຄວາມຈິງແລະຄວາມຍຸດຕິທັມຢູ່ໃນຂັ້ນອັນຕະລາຍ. ນັ້ນຄືການເຮັດໃນສິ່ງທີ່ຖືກຕ້ອງສເມີ.

| |
|---|
| ພວກເຮົາຈະຕັດສິນໃຈໄດ້ຢ່າງໃດວ່າເມື່ອໃດທີ່ຄວນລຸກຂຶ້ນຕໍ່ສູ້? |

## ນຳໃຊ້ໃນຊີວິດ

ທ່ານຈະຢືນຢັດກັບຄວາມສຳນຶກຜິດແລະຊອບຢ່າງໃດໃນອາທິດນີ້? ຈົ່ງເລືອກເອົາຄຳແນະນຳອັນນຶ່ງຕໍ່ລົງໄປນີ້.

- **ອະທິຖານ.** ທວງຖາມພຣະເຈົ້າເອົາຄວາມກ້າຫານໃນການເຮັດໃນສິ່ງທີ່ຖືກຕ້ອງໃນທາງເລັກນ້ອຍເມື່ອໂອກາດຫາກເປີດໃຫ້ໃນຄອບຄົວ, ຄຸ້ມບ້ານ, ແລະໃນໂບດຂອງທ່ານ.

- **ສັງເກດ.** ຊອກຫາທາງຕ່າງໆທີ່ທ່ານສາມາດໃຊ້ພອນສວັນຂອງທ່ານ, ສິມືພິເສດ, ແລະແຫຼ່ງທີ່ມາຂອງຄວາມຕ້ອງການເພື່ອເຮັດບາງຢ່າງທີ່ມີຄວາມໝາຍໃນການຊ່ອຍເຫຼືອພວກທີ່ອ່ອນກຳລັງທີ່ຢູ່ອ້ອມຮອບທ່ານ.

- **ຢ້ຽມຢາມ.** ກວດສອບບ່ອນທີ່ພວກບໍ່ມີທີ່ຢູ່ອາສັຍໃນທ້ອງຖິ່ນ, ອົງການຕໍ່ຕ້ານ ການຄ້າຂາຍຄົນ, ຫຼືສູນກາງຊ່ວຍເຫຼືອພວກຕັ້ງທ້ອງຈົ່ງຊອກຫາທາງຕ່າງໆທີ່ທ່ານສາມາດຊ່ວຍເຮັດໃຫ້ມີຄວາມຍຸດຕິທັມແລະຄວາມເມດຕາເພື່ອຕາງໜ້າໃຫ້ພວກທີ່ບໍ່ສາມາດມີສິດສຽງ.

ພວກເຮົາເກືອບໝົດທຸກຄົນເຄີຍຢູ່ໃນເຫດການບໍ່ວ່າຈະຢູ່ຕາມຄຸ້ມບ້ານ, ບ່ອນເຮັດວຽກທຳງານ, ຫຼືໂບດ, ບ່ອນທີ່ພວກເຮົາໄດ້ມີໂອກາດໄດ້ເວົ້າບາງຢ່າງເພື່ອແກ້ໄຂຄວາມຜິດພາດແລະພວກເຮົາບໍ່ໄດ້ເຮັດ. ໃຫ້ພວກເຮົາມາຮຽນຈາກຕົວຢ່າງຂອງທ່ານໂມດີຄາຍແລະເທື່ອໜ້າຕ້ອງເຮັດໃຫ້ມັນແຕກຕ່າງ!

## ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA